**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

# ບັນດາການນຳກະຊວງ ແລະ ແຂວງວຽງຈັນ ປຶກສາຫາລື ເລື່ອງລະດັບນ້ຳຂອງລ້ອງນ້ຳງື່ມ

ໃນວັນທີ 26 ສິງຫາ 2018, ທ່ານ ຈັນສອນ ແສນບຸດຕະລາດ, ຮອງລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່ ພ້ອມດ້ວຍຄະນະ, ທ່ານ ບຸນອູ້ມ ສີວັນເພັງ, ຜູ້ອຳນວຍການໃຫຍ່ ລັດວິສາຫະກິດໄຟຟ້າລາວ, ທ່ານ ນາງ ລັດຕະນາ ປະທຸມວັນ, ຜູ້ອຳນວຍການໃຫຍ່ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ພ້ອມດ້ວຍຄະນະ ໄດ້ເຂົ້າຮ່ວມກອງປະຊຸມປຶກສາຫາລືກ່ຽວກັບການບໍລິຫານຈັດການບັນຫານ້ຳທີ່ມີລະດັບສູງຂຶ້ນ ຕາມລ້ອງນ້ຳງື່ມໃນຊ່ວງລະດູຝົນນີ້ ຮ່ວມກັບບັນດາການນຳແຂວງວຽງຈັນ ຊຶ່ງນຳໂດຍ ທ່ານ ບຸນສອນ ເພັດລາວັນ, ຮອງເຈົ້າແຂວງ ແຂວງວຽງຈັນ, ທີ່ສຳນັກງານປົກຄອງເມືອງທຸລະຄົມ, ແຂວງວຽງຈັນ. ພາຍຫຼັງກອງປະຊຸມສິ້ນສຸດລົງ ຕາງໜ້າກະຊວງພະລັງງານ ແລະ ບໍ່ແຮ່ ໄດ້ມອບເງິນສົດຈຳນວນ 50.000.000 ກີບໃຫ້ກັບແຂວງວຽງຈັນ ເພື່ອສະໜັບສະໜູນໃນການນຳໃຊ້ເຂົ້າໃນວຽກງານບໍລິຫານຕ່າງໆໃນການເຝົ້າລະວັງລະດັບນ້ຳ ລຽບຕາມລ້ອງນ້ຳງື່ມ. ຫຼັງຈາກນັ້ນກໍ່ໄດ້ລົງພື້ນທີ່ຕົວຈິງເພື່ອສຳຫຼວດສະພາບການ ຂຶ້ນ-ລົງຂອງລະດັບນ້ຳ ແລະ ສະພາບການເປັນຢູ່ຂອງປະຊາຊົນທີ່ບ້ານຫາດໄຊ, ເມືອງທຸລະຄົມ ແລະ ເມືອງແກ້ວອຸດົມ ແຂວງວຽງຈັນ.

**ບົດຂ່າວໂດຍ: ພະແນກສື່ສານອົງກອນ, ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ**

**ຂໍ້ມູນເພີ່ມເຕີມ: www.edlgen.com.la**



